ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3599 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 19/11/2025

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາວຽກງານສ້ອມແປງ ແລະ ຕົບແຕ່ງຊັ້ນ 02 ແລະ 03 ສາຂາໄຊສົມບູນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາວຽກການສ້ອມແປງ ແລະ ຕົບແຕ່ງໜ່ວຍບໍລິການໄຊເສດຖາ ເຊິ່ງຕັ້ງຢູ່ ບ້ານພູຫົວຊ້າງ ເມືອງອານຸວົງ ແຂວງ ໄຊສົມບູນ ໂດຍມີເນື້ອໃນດັ່ງນີ້:

**I. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

1) ເອກະສານດ້ານລາຄາໃບປະເມີນລາຄາລວມອາກອນມູນຄ່າເພີ່ມ 10% ຕ້ອງເປັນສະກຸນເງິນກີບ 1 ຊຸດ
2) ໜັງສືຄໍ້າປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 23/02/2026) ຫຼື ແຊັກທີ່ວິຊາແລ້ວ ຫຼື ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄໍ້າປະກັນ ຫຼື ແຊັກດັ່ງກ່າວຄືນ. ສຳລັບຜູ້ຊະນະປະມູນແມ່ນຈະສົ່ງຄືນພາຍ ຫຼັງເຊັນສັນຍາ.
3) ໃບທະບຽນວິສາຫະກິດ
4) ໃບອະນຸຍາດດຳເນີນທຸລະກິດປີ 2024 ຫຼື 2025
5) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ
6) ໃບຢັ້ງຢືນການເສຍອາກອນປີ 2023 ຫຼື 2024
7) ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງທະນາຄານ ຫຼື ສຳນັກງານ ຫ້ອງການຢ່າງໜ້ອຍ 3 ໂຄງການ
   - ໃຫ້ບໍລິສັດສົ່ງຊອງເອກະສານດ້ານເຕັກນິກ ຂໍ້ 3)-7) ມາໃຫ້ ທຄຕລ ກ່ອນວັນທີ 12/12/2025 (ບໍ່ປິດຊອງ);
   - ວັນອັງຄານ, ວັນທີ 23/12/2025, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຜູ້ຮັບເໝົາຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;
   - ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດສ້ອມແປງ ແລະ ຕົບແຕ່ງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.
8) ບໍລິສັດຕ້ອງລົງສຳຫຼວດເບິ່ງສະຖານທີ່ຕົວຈິງກ່ອນຍື່ນຊອງປະມູນລາຄາ ຖ້າຫາກມີວຽກທີ່ຕ້ອງເຮັດເພີ່ມບໍລິສັດສາມາດຄິດໄລ່ມາພ້ອມມື້ຍື່ນຊອງປະມູນ ໂດຍໃຫ້ແຍກເປັນໝວດຕ່າງຫາກ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

II. **ການພົວພັນ ແລະ ໄລຍະເວລາການຮັບເໝົາ**

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບເຕັກນິກການຕົບແຕ່ງ ຫຼື ລົງສຳຫຼວດສະຖານທີ່ຕົບແຕ່ງ ຈາກວັນທີ 24/11/2025-18/12/2025, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆທັງໝົດ.

2) ບໍລິສັດສາມາດພົວພັນເອົາເອກະສານ ເລີ່ມແຕ່ວັນທີ 24/11/2025-18/12/2025, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່, ຄ່າທຳນຽມເອກະສານ 1.000.000 ກີບ/ຊຸດ, ລາຍລະອຽດເອກະສານປະກອບມີດັ່ງນີ້:

- ໃບປະເມີນລາຍການໜ້າວຽກ 1 ຊຸດ;
- ແບບກໍ່ສ້າງ ແລະ ຕົບແຕ່ງ 1 ຊຸດ.

3) ໄລຍະການຮັບເໝົາສ້ອມແປງ ແລະ ຕົບແຕ່ງບໍ່ເກີນ 12 ເດືອນ.

III. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ.

2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຮັບເໝົາ.

3) ການຊຳລະແບ່ງອອກເປັນ 4 ງວດ:

**ງວດທີ 1** ຊຳລະ 15% ຂອງມູນຄ່າທັງໝົດ ພາຍຫຼັງຜູ້ຮັບເໝົານຳວັດຖຸອຸປະກອນ, ເຄື່ອງກົນຈັກຕ່າງໆ ເຂົ້າສະໜາມ ແລະ ປະຕິບັດວຽກມີຄວາມຄືບໜ້າ 20% ຂຶ້ນໄປ ໂດຍໄດ້ຮັບການຢັ້ງຢືນຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ ຫຼື ຜູ້ຮັບເໝົາສາມາດປະກອບໜັງສືຄ້ຳປະກັນທະນາຄານທີ່ມີມູນຄ່າຢ່າງໜ້ອຍ 20% ຂຶ້ນໄປ;

**ງວດທີ 2** ຊຳລະ 35% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 50% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;

**ງວດທີ 3** ຊຳລະ 40% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກ 100% ໂດຍໄດ້ຮັບການກວດວຽກຈາກຄະນະກຳມະການຕິດຕາມກວດກາ ຫຼື ຄະນະກຳມະການກ່ຽວຂ້ອງ ທຄຕລ;

**ງວດທີ 4** ຫັກເງິນຄ້ຳປະກັນຄຸນນະພາບໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ທ. ສາຍສະໝອນ ຈັນທະຈັກ**

ຜູ້ປະສານງານ: